**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ເລກທີ 1354/ກງ

ນະຄອນຫຼວງວຽງຈັນ, ວັນທີ 02 ພຶດສະພາ 2025

# ຂໍ້ຕົກລົງ

## ວ່າດ້ວຍ ການປະເມີນຜູ້ບໍລິຫານ ຝ່າຍລັດ ໃນ ວິສາຫະກິດລັດລົງທຶນ

- ອີງຕາມ ກົດໝາຍ ວ່າດ້ວຍ ວິສາຫະກິດ ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ດຳລັດ ວ່າດ້ວຍ ວິສາຫະກິດລັດລົງທຶນ ສະບັບເລກທີ 322/ລບ, ລົງວັນທີ 02 ກັນຍາ 2022;
- ອີງຕາມ ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ສະບັບເລກທີ 353/ນຍ, ລົງວັນທີ 02 ສິງຫາ 2024;
- ອີງຕາມ ໜັງສືສະເໜີ ຂອງ ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ສະບັບເລກທີ 00494-01/ຄລປ, ລົງວັນທີ 21 ເມສາ 2025.

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ມີຈຸດປະສົງເພື່ອຜັນຂະຫຍາຍ ດຳລັດ ວ່າດ້ວຍ ວິສາຫະກິດລັດລົງທຶນ, ເປັນເຄື່ອງມືໃນການປະເມີນຜູ້ບໍລິຫານຝ່າຍລັດ ໃນ ວິສາຫະກິດລັດລົງທຶນ, ແນ່ໃສ່ຊຸກຍູ້ ຕິດຕາມ ການປະຕິບັດໜ້າທີ່ ໃນການຊີ້ນຳ ນຳພາ ແລະ ຄຸ້ມຄອງບໍລິຫານ ວິສາຫະກິດລັດລົງທຶນ ໃຫ້ດຳເນີນທຸລະກິດ ຢ່າງມີປະທິພາບປະສິດທິຜົນ, ສາມາດບັນລຸເປົ້າໝາຍສູງສຸດ ແລະ ຍົກສູງຄວາມຮັບຜິດຊອບຕາມພາລະບົດບາດຂອງຕົນເອງ ແລະ ບົດບາດທີ່ລັດ ໄດ້ມອບໝາຍໃຫ້.

### ມາດຕາ 2 ຜູ້ບໍລິຫານຝ່າຍລັດ

ຜູ້ບໍລິຫານຝ່າຍລັດ ແມ່ນ ບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຈາກກະຊວງການເງິນ ເພື່ອເປັນຜູ້ບໍລິຫານວິສາຫະກິດລັດລົງທຶນ ທີ່ປະກອບມີ ສະພາບໍລິຫານ (ປະທານ, ຮອງປະທານ ແລະ ກຳມະການ ສະພາບໍລິຫານ) ແລະ ຄະນະອຳນວຍການ ຂອງວິສາຫະກິດລັດລົງທຶນ. ຜູ້ບໍລິຫານຝ່າຍລັດ ປະກອບມີ ສອງ ປະເພດ ຄື:

1. ຜູ້ບໍລິຫານທີ່ເປັນລັດຖະກອນ ແມ່ນ ພະນັກງານ-ລັດຖະກອນທີ່ມີມາດຖານເງື່ອນໄຂຄົບຖ້ວນຈາກ ກະຊວງການເງິນ ແລະ ກະຊວງກ່ຽວຂ້ອງ.
2. ຜູ້ບໍລິຫານມືອາຊີບ ແມ່ນ ບຸກຄົນທີ່ບໍ່ແມ່ນພະນັກງານ-ລັດຖະກອນ ແຕ່ມີມາດຖານເງື່ອນໄຂຄົບຖ້ວນ ດ້ານຄຸນວຸດທິ, ຄວາມຮູ້ ແລະ ປະສົບການ ແລະ ດ້ານເຕັກນິກວິຊາສະເພາະ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ຕາງໜ້າລັດຖະບານ ບໍລິຫານວິສາຫະກິດລັດລົງທຶນ, ເຊິ່ງປະກອບມີ:
    - ❖ ມືອາຊີບພາຍໃນ ແມ່ນ ບຸກຄະລາກອນພາຍໃນວິສາຫະກິດລັດລົງທຶນ; ແລະ
    - ❖ ມືອາຊີບພາຍນອກ ຫຼື ມືອາຊີບອິດສະຫຼະ ແມ່ນ ຄັດເລືອກແບບເປີດກວ້າງ.

**ມາດຕາ 3 ການປະເມີນຜູ້ບໍລິຫານຝ່າຍລັດ**

ການປະເມີນຜູ້ບໍລິຫານຝ່າຍລັດ ແມ່ນ ການປະເມີນຕີລາຄາ ການປະຕິບັດໜ້າທີ່ວຽກງານ ຂອງ ສະພາບໍລິຫານ ແລະ ອຳນວຍການ ຝ່າຍລັດ ຢູ່ໃນວິສາຫະກິດລັດລົງທຶນ, ເຊິ່ງແນ່ໃສ່ການປະເມີນຜົນສຳເລັດໃນການປະຕິບັດໜ້າທີ່ຕາມພາລະບົດບາດ ທີ່ກຳນົດໄວ້ໃນລະບຽບການ ໂດຍນຳໃຊ້ບັນດາຕົວຊີ້ວັດຕ່າງໆ ເປັນຕົ້ນແມ່ນ:

- ເນື້ອໃນມາດຖານ ທາງດ້ານຄຸນທາດການເມືອງ ແລະ ຄຸນສົມບັດ ສິນທຳປະຕິວັດ;
- ເນື້ອໃນດ້ານຄວາມຮູ້, ຄວາມສາມາດ ແລະ ປະສົບການ;
- ດ້ານແບບແຜນວິທີເຮັດວຽກ;
- ການເປັນຜູ້ນຳ;
- ການຄົ້ນຄວ້າ ສ້າງ ແລະ ຊີ້ນຳການຈັດຕັ້ງປະຕິບັດແຜນທຸລະກິດປະຈຳປີ ແລະ ແຜນຍຸດທະສາດ;
- ການປະຕິບັດໜ້າທີ່ຕາມລະບຽບກົດໝາຍ;
- ການໃຫ້ຄວາມຮ່ວມມືເຊິ່ງກັນ ແລະ ກັນ ລະຫວ່າງ ສະພາບໍລິຫານ ແລະ ຜູ້ອຳນວຍການ;
- ການໃຫ້ຄວາມຮ່ວມມື ລະຫວ່າງ ຜູ້ບໍລິຫານຝ່າຍລັດ ແລະ ອົງການກ່ຽວຂ້ອງຂອງລັດ;
- ການມີສ່ວນຮ່ວມໃນການບໍລິຫານວິສາຫະກິດລັດລົງທຶນ;
- ຜົນການດຳເນີນທຸລະກິດ ແລະ ການຈັດປະເພດ ຂອງ ວິສາຫະກິດລັດລົງທຶນ.

ເປົ້າໝາຍການປະເມີນຜູ້ບໍລິຫານຝ່າຍລັດ ແມ່ນ ຜູ້ບໍລິຫານມືອາຊີບ ທັງໝົດ ແລະ ຜູ້ບໍລິຫານທີ່ເປັນລັດຖະກອນ ທີ່ມີຕຳແໜ່ງບໍລິຫານປະເພດ ສອງ ລົງມາ.

**ມາດຕາ 4 ຂັ້ນຕອນການປະເມີນ**

1. ຜູ້ບໍລິຫານຝ່າຍລັດ ຕ້ອງເປັນເຈົ້າການຕອບ ຄຳຖາມການປະເມີນຕົນເອງ ຢູ່ໃນລະບົບຄຸ້ມຄອງວິສາຫະກິດລັດລົງທຶນ ຂອງ ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ໂດຍມີກຳນົດເວລາ 1 ເດືອນ ໃນການປະເມີນຕົນເອງ (ວັນທີ 01-31 ສິງຫາ ຂອງທຸກປີ);
2. ໃນບາງກໍລະນີ, ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ສາມາດແຈ້ງໃຫ້ຜູ້ບໍລິຫານຝ່າຍລັດ ດຳເນີນການປະເມີນຕົນເອງ ດ້ວຍຮູບແບບ ການຂຽນໃບປະເມີນຕົນເອງ ແລະ ການປະເມີນຈາກໝູ່ຄະນະ ແລ້ວສົ່ງໃຫ້ ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ;

3. ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ດຳເນີນການກວດກາ ແລະ ປະເມີນຄືນ ຜົນການປະເມີນຕົນເອງ ຂອງ ຜູ້ບໍລິຫານຝ່າຍລັດ ໃຫ້ສຳເລັດພາຍໃນວັນທີ 30 ກັນຍາ ຂອງທຸກປີ ພ້ອມທັງ ດຳເນີນການຈັດປະເພດ ຕາມຄະແນນທີ່ໄດ້ຮັບ ດັ່ງນີ້:
    - 75-100 ຄະແນນ ແມ່ນ ຈັດເປັນ **ປະເພດ 1 = ດີ**
    - 50-74 ຄະແນນ ແມ່ນ ຈັດເປັນ **ປະເພດ 2 = ປານກາງ**
    - 01-49 ຄະແນນ ແມ່ນ ຈັດເປັນ **ປະເພດ 3 = ອ່ອນ**
4. ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ສະຫຼຸບສັງລວມ ແລະ ລາຍງານຜົນການປະເມີນຜູ້ບໍລິຫານຝ່າຍລັດ ໃຫ້ແກ່ ຄະນະນຳກະຊວງການເງິນ ພ້ອມທັງ ແຈ້ງຜົນດັ່ງກ່າວ ໃຫ້ຜູ້ບໍລິຫານຝ່າຍລັດ ທີ່ໄດ້ຮັບການປະເມີນ ຮັບຮູ້ ພາຍໃນເດືອນຕຸລາຂອງທຸກປີ.

**ມາດຕາ 5 ການນຳໃຊ້ຜົນການຈັດປະເພດ**

ກະຊວງການເງິນ ຈະບັນທຶກຜົນການຈັດປະເພດຜູ້ບໍລິຫານຝ່າຍລັດ ແລະ ຈະປະຕິບັດ ດັ່ງນີ້:

- **ປະເພດ 1:** ຜູ້ບໍລິຫານຝ່າຍລັດ ຈະໄດ້ຮັບເງິນບຳເນັດປະຈຳປີ ຕາມການຕົກລົງເຫັນດີຂອງກອງປະຊຸມຜູ້ຖືຮຸ້ນ ຫຼື ກອງປະຊຸມສະພາບໍລິຫານ. ພ້ອມນີ້, ກະຊວງການເງິນ ຈະຄົ້ນຄວ້າການປະຕິບັດນະໂຍບາຍຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມຄວາມເໝາະສົມ;
- **ປະເພດ 2:** ຜູ້ບໍລິຫານຝ່າຍລັດ ຈະໄດ້ຮັບເງິນບຳເນັດປະຈຳປີ ຕາມການຕົກລົງເຫັນດີຂອງກອງປະຊຸມຜູ້ຖືຮຸ້ນ ຫຼື ກອງປະຊຸມສະພາບໍລິຫານ ແຕ່ຕ້ອງໄດ້ຮັບການເຫັນດີຈາກກະຊວງການເງິນ. ພ້ອມນີ້, ກະຊວງການເງິນ ອາດຈະມີການປັບປຸງ-ສັບຊ້ອນ ຕາມຄວາມເໝາະສົມ;
- **ປະເພດ 3:** ຜູ້ບໍລິຫານຝ່າຍລັດ ຈະບໍ່ໄດ້ຮັບເງິນບຳເນັດປະຈຳປີ ແລະ ກະຊວງການເງິນ ຈະປັບປຸງ-ສັບຊ້ອນ ຕາມຄວາມເໝາະສົມ.

**ມາດຕາ 6 ມາດຕະການ**

ກໍລະນີ ຜູ້ບໍລິຫານຝ່າຍລັດ ບໍ່ໃຫ້ການຮ່ວມມືໃນການປະເມີນຜົນຕາມຂໍ້ຕົກລົງສະບັບນີ້ ໂດຍສະເພາະ ບໍ່ປະຕິບັດຕາມຂໍ້ 1 ແລະ ຂໍ້ 2 ຂອງມາດຕາ 4 ຂ້າງເທິງ ສິ່ງຜົນເຮັດໃຫ້ບໍ່ສາມາດປະເມີນຜົນ ແລະ ຈັດປະເພດໄດ້ ຫຼື ປະເມີນຜົນ ແລະ ຈັດປະເພດໄດ້ຊ້າກວ່າກຳນົດ, ກະຊວງການເງິນ ຈະປະຕິບັດມາດຕະການ ດັ່ງນີ້:

- ຄັ້ງທຳອິດ ແມ່ນ ຈະຄົ້ນຄວ້າການປັບປຸງ-ສັບຊ້ອນ ຫຼື ນຳໃຊ້ມາດຕະການອື່ນຕາມຄວາມເໝາະສົມ.
- ຄັ້ງທີສອງ ແມ່ນ ຈະປົດຕຳແໜ່ງຜູ້ກ່ຽວ ອອກຈາກການເປັນຜູ້ບໍລິຫານຝ່າຍລັດ ທັນທີ ແລະ ຈະບໍ່ຄົ້ນຄວ້າແຕ່ງຕັ້ງຜູ້ກ່ຽວ ເປັນຜູ້ບໍລິຫານຝ່າຍລັດ ຕື່ມອີກ ພາຍໃນໄລຍະເວລາ ສາມ ປີ ແລະ ອາດຈະຄົ້ນຄວ້າມາດຕະການອື່ນຕາມຄວາມເໝາະສົມ.

**ມາດຕາ 7 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ເປັນເຈົ້າການຜັນຂະຫຍາຍລະອຽດ ກ່ຽວກັບ ບັນດາເນື້ອໃນໂຕຊີ້ວັດການປະເມີນຜູ້ບໍລິຫານຝ່າຍລັດ ໃນ ວິສາຫະກິດລັດລົງທຶນ ແລະ ເອົາເຂົ້າໃນລະບົບຄຸ້ມຄອງວິສາຫະກິດລັດລົງທຶນ ພ້ອມດ້ວຍວິທີການໃຫ້ຄະແນນ ແລະ ການສະຫຼຸບສັງລວມເພື່ອຈັດປະເພດ.

ມອບໃຫ້ ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ, ບັນດາວິສາຫະກິດລັດລົງທຶນ, ຜູ້ບໍລິຫານຝ່າຍລັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 8 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນ ເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງການເງິນ

ລັດຖະມົນຕີ

ສັນຕິພາບ ພົມວິຫານ